**ຜນວກ ກ**

**ຖະແຫລງການຮ່ວມກ່ຽວກັບການຮ່ວມມື ທະວິພາຄີ ລະຫວ່າງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະສາທາລະນະລັດ ປະຊາຊົນຈີນ**

**(แถลงการณ์ร่วมความร่วมมือทวิภาคีระหว่างลาวกับจีน**

**12 พฤศจิกายน 2000)**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດ ປະຊາຊົນຈີນ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ສອງຝ່າຍ") ພາຍຫລັງທີ່ໄດ້ປັບລຸການພົວພັນອັນເປັນປົກກະຕິ ນັບແຕ່ປີ 1998 ມານີ້, ມິດຕະພາບອັນເປັນມູນເຊື້ອ ແລະການພົວພັນຮ່ວມມືອັນດີລະຫວ່າງສອງປະເທດ ໄດ້ຮັບການຟື້ນຟູ ແລະຂະຫຍາຍຕົວຢ່າງຮອບດ້ານ, ການແລກປ່ຽນ ແລະການຮ່ວມມືໃນດ້ານການເມືອງ, ເສດຖະກິດ, ການຄ້າ, ການທະຫານ, ວັດທະນະທຳ, ການສຶກສາ ແລະຂົງເຂດ ອື່ນ ໆ ໄດ້ຮັບການເພີ່ມທະວີຢ່າງບໍ່ຢຸດຢັ້ງ

ທັງ 2 ຝ່າຍ ເຫັນເປັນເອກພາບນຳກັນວ່າ ມິດຕະພາບລະຫວ່າງ 2 ປະເທດ ແລະປະຊາຊົນ 2 ຊາດລາວ ແລະຈີນ ແມ່ນມີມາແຕ່ດົນນານ ແລະຈະຂະຫຍາຍຕົວເລື້ອຍ ໆ ໄປ, ທັງສອງປະເທດມີອຸດົມຄະຕິ ແລະຈຸດໝາຍສູ້ຊົນອັນດຽວກັນ, ການປັບປຸງສາຍສຳພັນ ມິດຕະພາບຖານບ້ານໃກ້ເຮືອນຄຽງ ລະຫວ່າງລາວ ແລະຈີນໃຫ້ແໜ້ນແຟ້ນ ແລະຂະຫຍາຍຕົວຕື່ມອີກກ້າວໜຶ່ງນັ້ນ ບໍ່ພຽງແຕ່ສອດຄ່ອງກັບຜົນປະໂຫຍດຂັ້ນພື້ນຖານຂອງ 2 ປະເທດ ແລະປະຊາຊົນ 2 ຊາດເທົ່ານັ້ນ, ຍັງເປັນຜົນດີໃຫ້ແກ່ສັນຕິພາບ, ສະຖຽນລະພາບ ແລະການພັດທະນາ ຂອງພາກພື້ນນີ້ອີກດ້ວຍ

ໃນການເລີ່ມຕົ້ນ ຂອງສັດຕະວັດໃໝ່ນີ້, ທັງ 2 ຝ່າຍ ເຫັນພ້ອມນຳກັນທີ່ຈະສ້າງຂອບແຫ່ງການຮ່ວມມືທະວິພາຄີ, ໂດຍວາງແຜນກຳໜົດການຮ່ວມມືໃນຂົງເຂດຕ່າງ ໆ ແນ່ໃສ່ກ້າວໄປສູ່ການສ້າງການພົວພັນຮ່ວມມືຮອບດ້ານ ທີ່ໝັ້ນຄົງຍາວນານ, ມີໄມຕີຈິດຖານບ້ານໃກ້ ເຮືອນຄຽງ ແລະໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະກັນ

**ດ້ວຍຈຸດປະສົງດັ່ງກ່າວ ຈຶ່ງໄດ້ຖະແຫລງຄືດັ່ງລຸ່ມນີ້:**

1. ທັງ 2 ຝ່າຍ ຮັບຮູ້ວ່າ, ວັດຖຸປະສົງ ແລະຫລັກການຂອງ "ກົດບັດສະຫະປະຊາຊາດ", 5 ຫລັກການແຫ່ງການຢູ່ຮ່ວມກັນໂດຍສັນຕິ, ບັນດາຫລັກການທີ່ກຳໜົດໄວ້ໃນ "ສົນທິສັນຍາໄມຕີຈິດ ແລະການຮ່ວມມືຂອງອາຊີອາຄະເນ" ແລະ ບັນດາບັນທັດຖານຂອງກົດໝາຍສາກົນ ທີ່ຊາວໂລກຮັບຮູ້ນຳກັນນັ້ນ ແມ່ນບັນທັດຖານໃນການແກ້ໄຂບັນຫາການພົວພັນ ລະຫວ່າງ 2 ປະເທດ

2. ທັງ 2 ຝ່າຍເຫັນດີໃຫ້ຮັກສາການພົບປະ ແລະການແລກປ່ຽນຢ້ຽມຢາມທີ່ສະໜິດແໜ້ນລະຫວ່າງການນຳຂັ້ນສູງຂອງ 2 ປະເທດ, ກໍ່ຄືຮັກສາການໄປມາຫາສູ່ ແລະການຮ່ວມມືທີ່ສະໜິດແໜ້ນລະຫວ່າງບັນດາຂະແໜງການຂອງພັກ ແລະລັດຖະບານ, ສະພາແຫ່ງຊາດ, ກອງທັບ, ອົງກອນຈັດຕັ້ງມະຫາຊົນ ພ້ອມທັງທ້ອງຖິ່ນຕ່າງ ໆ ຂອງ 2 ປະເທດ ແນໃສ່ຊຸກຍູ້ສາຍພົວພັນມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ເປັນມູນເຊື້ອ ແລະການຮ່ວມມືຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫວ່າງລາວ ແລະຈີນ ໃຫ້ຂະຫຍາຍຕົວຢ່າງຮອບດ້ານ ແລະເລິກເຊິ່ງ

3. ທັງ 2 ຝ່າຍເຫັນດີໃຫ້ຮັກສາການປຶກສາຫາລື ແລະການແລກປ່ຽນລະຫວ່າງກະຊວງການຕ່າງປະເທດ ຂອງທັງ 2 ປະເທດ ເພື່ອແລກປ່ຽນຄວາມຄິດຄວາມເຫັນກ່ຽວກັບການພົວພັນທະວິພາຄີ, ບັນຫາພາກພື້ນ ແລະສາກົນ ທີ່ມີຄວາມສົນໃຈຮ່ວມກັນຢ່າງທັນການ, ພ້ອມທັງນຳໃຊ້ບັນດາສະຖານທີ່ພະຫຸພາຄີ ເພື່ອຮັກສາການຕິດຕໍ່ພົວພັນອັນເປັນປົກກະຕິ, ແນໃສ່ຕັ້ງຫນ້າຊຸກຍູ້ການພົວພັນ ລະຫວາງ 2 ປະເທດໃຫ້ຂະຫຍາຍຕົວເລື້ອຍ ໆ

4. ທັງ 2 ຝ່າຍເຫັນວ່າ, ບົນພື້ນຖານການຮ່ວມມືທີ່ດີງາມປັດຈຸບັນນີ້, ຄວນເສີມຂະຫຍາຍທ່າແຮງທາງດ້ານການເມືອງ ແລະທີ່ຕັ້ງພູມສາດ ຂອງທັງ 2 ປະເທດຢ່າງເຕັມທີ່ ເພື່ອຊຸກຍູ້ການພົວພັນຮ່ວມມືດ້ວຍໄມຕີຈິດ ລະຫວ່າງ 2 ຝ່າຍໃນດ້ານເສດຖະກິດ, ການຄ້າ, ການລົງທຶນ, ດ້ານກະສິກຳ ປ່າໄມ, ການທ່ອງທ່ຽວ ແລະຂົງເຂດອື່ນ ໆໃຫ້ຂະຫຍາຍຕົວຕື່ມອີກກ້າວຫນຶ່ງ ດັ່ງນັ້ນ:

ກ. ທັງ 2 ຝ່າຍ ຈະສືບຕໍ່ເພີ່ມທະວີການຊີ້ນຳ ແລະການປະສານງານໃນການຮ່ວມມືທາງດ້ານເສດຖະກິດການຄ້າ. ເສີມຂະຫຍາຍຄຸນປະໂຫຍດຂອງຄະນະກຳມາທິການຮ່ວມມືທາງດ້ານເສດຖະກິດການຄ້າ ແລະເຕັກນິກ ລະຫວ່າງສອງປະເທດ ຕື່ມອີກກ້າວຫນຶ່ງ. ສືບຕໍ່ປັບປຸງບັນດາຂໍ້ກຳຫນົດກົດຫມາຍທີ່ກ່ຽວຂ້ອງໃຫ້ສົມບູນ. ເຮັດໃຫ້ການເຄື່ອນໄຫວຂອງຫົວຫນ່ວຍເສດຖະກິດຂອງຕົນເຂົ້າຢູ່ໃນຂອບລະບຽບ ແນໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ການເຄື່ອນໄຫວດ້ານເສດຖະກິດ ແລະການຄ້າ ຂອງຫົວຫນ່ວຍທຸລະກິດ ແລະວິສາຫະກິດ ຂອງທັງສອງຝ່າຍ, ພ້ອມກັນສ້າງສິ່ງແວດລ້ອມການຮ່ວມມື ທາງດ້ານເສດຖະກິດ ແລະການຄ້າ ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະເປັນລະບຽບ.

ຂ. ຕັ້ງຫນ້າຊອກຄົ້ນຫາວິທີທາງໃຫມ່ເພື່ອເປີດກວ້າງການຄ້າ ລະຫວ່າງສອງຝ່າຍ, ສືບຕໍ່ໃຊ້ມາດຕະການທີ່ມີປະສິດທິພາບເພື່ອກະຕຸກຊຸກຍູ້ການຄ້າຊາຍແດນ ລະຫວ່າງ 2 ປະເທດໃຫ້ຂະຫຍາຍຕົວອອກຕື່ມ. ສືບຕໍ່ປຸກລະດົມ ແລະໃຫ້ການສະຫນັບສະຫນູນຫົວໜ່ວຍທຸລະກິດ ຂອງທັງ 2 ຝ່າຍ ເພື່ອດຳເນີນການລົງທຶນເຊິ່ງກັນ ແລະກັນ. ເພີ່ມທະວີການຮ່ວມມືໃນຂົງເຂດການຮັບເໝົາໂຄງການ ແລະແຮງງານ.

ຄ. ເພີ່ມທະວີການຮ່ວມມືໃນດ້ານກະສິກຳ ແລະປ່າໄມ້ ລະຫວ່າງ 2 ປະເທດ ຕື່ມອີກກ້າວໜຶ່ງ, ດຳເນີນການຮ່ວມມືທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໃນດ້ານຕ່າງ ໆ ເຊັ່ນ ການພັດທະນາຊັບພະຍາກອນດ້ານກະສິກຳ ແລະປ່າໄມ້, ເຕັກນິກກະສິກຳປ່າໄມ້ ແລະເຄື່ອງກົນຈັກກະສິກຳປ່າໄມ້, ການປຸງແຕ່ງຜະລິດຕະພັນກະສິກຳປ່າໄມ້, ການປ້ອງກັນ, ການປາບປາມ ແລະການຕິດຕາມກວດກາພະຍາດພືດ ແລະສັດຕູພືດ, ການຮັກສາສິ່ງແວດລ້ອມ ແລະອື່ນ ໆ

ງ. ເພີ່ມທະວີການຮ່ວມມືໃນດ້ານການທ່ອງທ່ຽວ ລະຫວ່າງ 2 ປະເທດ. ຝ່າຍຈີນເຫັນດີຈັດປະເທດລາວເປັນປະເທດ ທີ່ຈະລະດົມສົ່ງເສີມໃຫ້ພົນລະເມືອງຂອງຈີນໄປທ່ອງທ່ຽວ, ອົງການທີ່ຮັບຜິດຊອບຂອງທັງສອງຝ່າຍ ຈະປຶກສາຫາລື ແລະກຳຫນົດວິທີການປະຕິບັດລະອຽດທີ່ກ່ຽວຂ້ອງ

5. ເພີ່ມທະວີການແລກປ່ຽນ ແລະການຮ່ວມມືໃນດ້ານວັດທະນາທຳ, ການສຶກສາ, ສາທາລະນະສຸກ, ກິລາ ແລະຂົງເຂດອື່ນ ໆ ລະຫວ່າງສອງປະເທດ, ເພີ່ມທະວີການແລກປ່ຽນ ແລະມິດຕະພາບລະຫວ່າງປະຊາຊົນທັງສອງປະເທດ ຕື່ມອີກກ້າວຫນຶ່ງ ໂດຍຜ່ານການແລກປ່ຽນຄະນະຢ້ຽມຢາມ, ການຈັດງານວາງສະແດງ, ການແລກປ່ຽນນັກສຶກສາ ແລະອື່ນ ໆ

6. ເພີ່ມທະວີການໄປມາຫາສູ່ສັນທະວະໄມຕີ ແລະການຮ່ວມມືລະຫວ່າງອົງການປ້ອງກັນຊາດຂອງສອງປະເທດ ແລະລະຫວ່າງກອງທັບຕື່ມອີກກ້າວໜຶ່ງ, ຮັກສາການແລກປ່ຽນຢ້ຽມຢາມລະຫວ່າງການນຳຂັ້ນສູງ, ເປີດກວ້າງການແລກປ່ຽນດ້ານພະນັກງານວິຊາສະເພາະເຕັກນິກ, ຊຸກຍູ້ການຮ່ວມມືດ້ານຄວາມໝັ້ນຄົງ

7. ທັງ 2 ຝ່າຍ ເຫັນວ່າ, ພາຍຫລັງທີ່ "ສັນຍາວ່າດ້ວຍລະບຽບການຊາຍແດນລາວຈີນ" ແລະ "ອານຸສັນຍາເພີ່ມເຕີມຂອງສັນຍາວ່າດ້ວຍລະບຽບການຊາຍແດນລາວຈີນ" ໄດ້ຮັບການລົງນາມເປັນຕົ້ນມາ, ການຄຸ້ມຄອງຊາຍແດນລະຫວ່າງລາວແລະຈີນໄດ້ຄ່ອຍໆເຂົ້າສູ່ລະບົບລະບຽບ ແລະມີບ່ອນອີງທາງກົດໝາຍ ອັນເປັນຜົນດີຕໍ່ການຊຸກຍູ້ການໄປມາຫາສູ່ກັນ ແລະການເຄື່ອນໄຫວທາງດ້ານເສດຖະກິດການຄ້າ ຕາມເຂດຊາຍແດນ. ທັງສອງຝ່າຍ ຈະສືບຕໍ່ເພີ່ມທະວີການຊີ້ນຳ ແລະການປະສານງານກັນໃນວຽກງານຄຸ້ມຄອງຊາຍແດນ ແນໃສ່ພ້ອມກັນປົກປັກຮັກສາສັນຕິພາບ, ຄວາມສະຫງົບສຸກ ແລະສະຖຽນລະພາບຕາມເຂດຊາຍແດນລາວ ແລະຈີນ

8. ທັງ 2 ຝ່າຍ ເຫັນດີຮັດແໜ້ນການຮ່ວມມືລະຫວ່າງອົງການຮັກສາຄວາມສະຫງົບສຸກ ແລະອົງການຍຸຕິທຳຕື່ມອີກກ້າວໜຶ່ງ, ເພີ່ມທະວີການແລກປ່ຽນຂໍ້ມູນ ແລະເອກະສານ, ພ້ອມກັນປາບປາມການຄ້າເຖື່ອນ, ການຄ້າຢາເສບຕິດ, ການລັກຂ້າມແດນ ແລະການເຄື່ອນໄຫວອາດສະຍາກຳຂ້າມຊາດອື່ນ ໆ

9. ທັງ 2 ຝ່າຍເຫັນວ່າການເພີ່ມທະວີການຮ່ວມມືທາງດ້ານເສດຖະກິດສີ່ຫຼ່ຽມ (ລາວ, ຈີນ, ມຽນມາ ແລະໄທ) ແລະການຮ່ວມມືທາງດ້ານເສດຖະກິດອະນຸພາກພື້ນແມ່ນ້ຳຂອງ (ລາວ, ຈີນ, ມຽນມາ, ກຳປູເຈັຍ, ມຽນມາ, ໄທ ແລະວຽດນາມ) ແມ່ນສອດຄ່ອງກັບຜົນປະໂຫຍດອັນຍາວນານຮ່ວມກັນ ຂອງທັງສອງປະເທດ ແລະຂອງບັນດາປະເທດທີ່ກ່ຽວຂ້ອງໃນພາກພື້ນນີ້ອີກດ້ວຍ, ທັງ 2 ຝ່າຍ ຈະໃຫ້ການສະໜັບສະໜູນ ແລະການຮ່ວມມືທີ່ດີກວ່າເກົ່າ

10. ຝ່າຍຈີນຢືນຢັນການເຄົາລົບ ເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຝ່າຍລາວ. ຝ່າຍລາວຢືນຢັນການຍຶດໝັ້ນໃນນະໂຍບາຍຈີນດຽວ, ຮັບຮູ້ວ່າສາທາລະນະລັດປະຊາຊົນຈີນແມ່ນລັດຖະບານທີ່ຖືກຕ້ອງຕາມກົດໝາຍອັນໜຶ່ງອັນດຽວຂອງປະເທດຈີນ, ໄຕ້ຫວັນແມ່ນດິນແດນພາກສ່ວນໜຶ່ງທີ່ບໍ່ສາມາດຈັດແຍກອອກໄດ້ຂອງປະເທດຈີນ, ເດັດດ່ຽວຄັດຄ້ານທຸກກົນອຸບາຍທີ່ຫວັງສ້າງ 2 ປະເທດຈີນ ຫລື "ໜຶ່ງຈີນ ໜຶ່ງໄຕ້ຫວັນ". ຝ່າຍຈີນສະແດງຄວາມຊົມເຊີຍຍິນດີຕໍ່ຫລັກໝັ້ນຂອງລັດຖະບານລາວ ທີ່ໃຫ້ການສະໜັບສະໜູນພາລະກິດອັນຍິ່ງໃຫຍ່ແຫ່ງການທ້ອນໂຮມປະເທດໂດຍສັນຕິຂອງປະເທດຈີນ ແລະຈະບໍ່ຂະຫຍາຍການພົວພັນແບບທາງການກັບໄຕ້ຫວັນ ບໍ່ວ່າຮູບການໃດ ໆ

11. ທັງ 2 ຝ່າຍ ຈະເພີ່ມທະວີການຮ່ວມມືກັນໃນບັນດາສະຖານທີ່ພະຫຸພາຄີ ເຊັ່ນ ໃນເວທີປາໄສພາກພື້ນອາຊຽນ (ARF), ກອງປະຊຸມບໍ່ເປັນທາງການຂອງຜູ້ນຳອາຊີຕາວັນອອກ, ໃນອົງການສະຫະປະຊາຊາດ ແລະອື່ນ ໆ, ຮັກສາການປະສານງານ ແລະການສົມທົບກັນທີ່ສະໜິດແໜ້ນໃນກິດຈະການພາກພື້ນ ແລະສາກົນ

12. ທັງ 2 ຝ່າຍເຫັນວ່າ ສະຖານະການສາກົນໃນສະເພາະໜ້ານີ້ພວມມີການຜັນແປຢ່າງເລິກເຊິ່ງ, ບັນຫາສັນຕິພາບ ແລະການພັດທະນາຍັງແມ່ນສອງປະເດັນໃຫຍ່ ຂອງໂລກປັດຈຸບັນ, ການຫັນເປັນຫລາຍຂົ້ວໄດ້ກາຍເປັນທ່າອ່ຽງທີ່ຕ້ອງເປັນໄປໃນການຂະຫຍາຍຕົວ ຂອງການພົວພັນສາກົນ. ທັງ 2 ຝ່າຍ

ເປັນເອກະພາບນໍາກັນຄັດຄ້ານເຈດຈໍານົງທີ່ແນໃສ່ສ້າງໂລກ "ຂົ້ວດຽວ" ຈະຮ່ວມແຮງກັນເຂົ້າໃນການສ້າງລະບຽບການສາກົນໃຫມ່ທາງດ້ານການເມືອງ ແລະເສດຖະກິດ ທີ່ທ່ຽງທໍາ ແລະສົມເຫດສົມຜົນ

13. ທັງ 2 ຝ່າຍ ຢືນຢັນຫລັກໝັ້ນທີ່ວ່າ ຫລັກການທົ່ວໄປຂອງສິດທິມະນຸດຄວນໃຫ້ສອດຄ້ອງກັບສະພາບການຕົວຈິງຂອງແຕ່ລະປະເທດ ລວມທັງຄວາມເປັນມາທາງປະຫວັດສາດ ແລະມູນເຊື້ອທາງວັດທະນະທໍາ. ບໍ່ວ່າປະເທດໃດຈະໃຫຍ່ຫລືນ້ອຍ, ເຂັ້ມແຂງຫລືອ່ອນແອກໍ່ຕາມ ລ້ວນແຕ່ມີສິດເລືອກເຟັ້ນເອົາລະບອບສັງຄົມ ແລະເສັ້ນທາງການພັດທະນາທີ່ສອດຄ່ອງກັບສະພາບການຕົວຈິງຂອງປະເທດຕົນ, ບໍ່ວ່າປະເທດໃດກໍ່ບໍ່ມີສິດແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດອື່ນດ້ວຍຂໍ້ອ້າງໃດ ໆ, ຄັດຄ້ານທຸກການກະທໍາແບບລັດທິເຈົ້າອໍານາດທີ່ເອົາບັນຫາສິດທິມະນຸດເປັນຂໍ້ອ້າງໄປສ້າງຄວາມເສຍຫາຍເຖິງອະທິປະໄຕຂອງປະເທດອື່ນ ແລະແຊກແຊງເຂົ້າກິດຈະການພາຍໃນຂອງປະເທດອື່ນ.

ຖະແຫລງການສະບັບນີ້ເຊັນທີ່ ນະຄອນຫລວງວຽງຈັນ ໃນວັນທີ່ 12 ພະຈິກ 2000

ຜູ້ຕາງຫນ້າຂອງ
ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ

ຜູ້ຕາງຫນ້າຂອງ
ສາທາລະນະລັດປະຊາຊົນຈີນ